# ສຸພາສິດ

ໃຈຄວາມສຳຄັນ ຄວາມປັນຍາ
ຂໍ້ຄວາມສຳຄັນ ບົດ ໑:໗
ສຸພາສິດ ພາສາເຮັບເຣີ ແປວ່າ "ຄຳປຽບທຽບ"
ຈຳນວນບົດ ໓໑ ບົດ

## ໑. ຄຳນຳ

ສ່ວນຫລາຍແລ້ວຄຳສຸພາສິດເຫລົ່ານີ້ແມ່ນກະສັດຊາໂລໂມນຂຽນ ແລະເນື້ອຄວາມທີ່ຂຽນກໍສແດງວ່າ ເພິ່ນມີປັນຍາຫລາຍທີ່ສຸດ ດັ່ງເນື້ອຄວາມທີ່ຂຽນບອກໄວ້ໃນໜັງສືກະສັດທີ ໑ ບົດ ໔:໒໙-໓໔ ວ່າເພິ່ນໄດ້ເທສນາຄຳສຸພາສິດ ໓໐໐໐ ຂໍ້ ແລະເພງ ໑໐໐໕ ບົດ ສ່ວນຄົນອື່ນກໍໄດ້ຂຽນເໝືອນກັນແຕ່ເປັນສ່ວນນ້ອຍຄືພວກຄົນທີ່ມີປັນຍາ (໒໒:໑໗; ໒໔:໒໓) ທ່ານອາກູເຣ (ບົດທີ ໓໐) ແລະກະສັດເລເໝືອນ (ບົດທີ ໓໑)

## ໒. ວ່າດ້ວຍຄວາມມຸ້ງໝາຍ

ຄວາມມຸ້ງໝາຍ ຂອງຜູ້ຂຽນ ໜັງສືນີ້ ຄືຈະເປັນເໝືອນ ດັ່ງຜູ້ຂຽນໄດ້ບອກໄວ້ໃນບົດ ໑:໒-໖ ນັ້ນ, ສມັນຈິ່ງຂໍໃຫ້ຄົນໜຸ່ມທຸກຄົນອ່ານໜັງສືຄຳສຸພາສິດນີ້ ເພາະເປັນຄຳສອນທີ່ດີແທ້ແລະເປັນປໂຍດຫລາຍດັ່ງເພິ່ນໄດ້ສອນໄວ້ວ່າ

ກ. ໃຫ້ຣະວັງການລໍ້ລວງຂອງຄົນບາບ ໑:໑໐-໑໙

ຂ. ໃຫ້ສແວງຫາທາງແຫ່ງຄວາມສຸກເໝືອນເປັນຂອງປະເສີດ (ບົດ ໒-໔)

ຄ. ໃຫ້ຣະວັງການລໍ້ລວງຂອງຜູ້ຍິງ (໕–໖)

ງ. ໃຫ້ຣະວັງຍິງໂສເພນີ (໗)

## ປ. ການປຽບທຽບກັບໜັງສືອື່ນ

| | | | | |
|---|---|---|---|---|
| ສຸພາສິດ | ໑:໒໐ | ທຽບກັບ | ໂຢຣັມ | ໑:໑ |
| ,, | ໑:໒໗ | ,, | ,, | ໑:໑–໒ |
| ,, | ໑:໒໘ | ,, | ,, | ໑:໓ |
| ,, | ໑:໓໐ | ,, | ເຮັບເຣີ | ໑:໒ |
| ,, | ໑:໑໔ | ,, | ໑ ໂກລິນໂທ | ໑:໓໐ |
| ,, | ໑:໓໔ | ,, | ໂຢຣັມ | ໖:໒໗ |
| ,, | ໓:໔ | ,, | ,, | ໖:໓໕ |

## ໔. ການແບ່ງເປັນພາກ

ພາກທີ ໑ ປັນຍາແທ້ມີປໂຍດຢ່າງໃດ ບົດ ໑–໙

ພາກທີ ໒ ການປະພຶດແລະທັມຈາຣິຍາ ບົດ ໑໐–໒໒:໑໖

ພາກທີ ໓ ຄຳເຕືອນໃຈແລະເພື່ອຮຽນຮູ້ປັນຍາ ບົດ ໒໒:໑໗–໒໔

ພາກທີ ໔ ຄຳສຸພາສິດແຫ່ງຊາໂລໂມນທີ່ພວກສມຽນແຫ່ງກະສັດເຮເຊເກັຍເຊົາໄດ້ໂຮມໄວ້ ບົດ ໒໕–໒໙

ພາກທີ ໕ ຖ້ອຍຄຳແຫ່ງອາຄູເຣແລະກະສັດເລມູເອນ ບົດ ໓໐–໓໑